ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 251 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 24 ມີນາ 2026

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການເປີດບັນຊີເງິນຝາກຢູ່ຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງ ວັນທີ 14 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເປີດບັນຊີເງິນຝາກ ຢູ່ຕ່າງປະເທດ ເພື່ອຮັບປະກັນການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະທດ ຂອງຜູ້ມີພຸມລຳເນົາ ຢູ່ ສປປ ລາວ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ສາມາດຄຸ້ມຄອງຕິດຕາມໄດ້ ແນໃສ່ສ້າງຄວາມສົມດຸນ ທາງດ້ານເງິນຕາ ໃນລະບົບເສດຖະກິດຂອງ ສປປ ລາວ.

**ມາດຕາ 2 ການຄຸ້ມຄອງການເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ການຄຸ້ມຄອງການເປີດບັນຊີເງິນຝາກຢູ່ຕ່າງປະເທດ ແມ່ນ ການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບ ການ ແລະ ມາດຕະການ ກ່ຽວກັບການນຳເງິນໄປຝາກໄວ້ ນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນ ໃດໜຶ່ງ ຢູ່ຕ່າງປະເທດ ຂອງຜູ້ມີພຸມລຳເນົາ ຢູ່ ສປປ ລາວ ເພື່ອເຄື່ອນໄຫວທຸລະກຳການ ຝາກ, ຖອນ, ໂອນເງິນ ແລະ ທຸລະກຳອື່ນ ທີ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນນັ້ນ ໃຫ້ບໍລິການ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ມີພຸມລຳເນົາ ຢູ່ ສປປ ລາວ, ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ທຫລ ປະຈຳພາກ ທີ່ເຄື່ອນໄຫວກ່ຽວຂ້ອງກັບການເປີດບັນຊີເງິນຝາກຢູ່ຕ່າງປະເທດ.

ຂໍ້ຕົກລົງສະບັບນີ້ ບໍ່ນຳໃຊ້ສຳລັບການເປີດ ແລະ ນຳໃຊ້ບັນຊີເງິນຝາກຢູ່ຕ່າງປະເທດ ທີ່ກ່ຽວຂ້ອງກັບ ການດຳເນີນທຸລະກິດ ຂອງທະນາຄານທຸລະກິດ.

## ໝວດທີ 2
## ເປົ້າໝາຍ ແລະ ປະເພດ ທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ

**ມາດຕາ 4 ເປົ້າໝາຍທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ເປົ້າໝາຍທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ປະກອບດ້ວຍ:

1. ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ;
2. ເປົ້າໝາຍທີ່ຕ້ອງຂໍອະນຸຍາດ.

**ມາດຕາ 5 ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ**

ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ ແມ່ນ ບຸກຄົນ ທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ຈຳເປັນຂໍອະນຸຍາດຈາກ ທຫລ ຊຶ່ງປະກອບດ້ວຍ ນັກຮຽນ-ນັກສຶກສາ, ນັກການທູດ, ພະນັກງານທີ່ຖືກມອບໝາຍໃຫ້ໄປເຮັດວຽກທາງລັດຖະການ ແລະ ຜູ້ອອກແຮງງານລາວ ຢູ່ຕ່າງປະເທດ.

**ມາດຕາ 6 ເປົ້າໝາຍທີ່ຕ້ອງຂໍອະນຸຍາດ**

ເປົ້າໝາຍທີ່ຕ້ອງຂໍອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດຈາກ ທຫລ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການນຳໃຊ້ບັນຊີເງິນຝາກຢູ່ຕ່າງປະເທດ ເຂົ້າໃນຈຸດປະສົງໃດໜຶ່ງ ດັ່ງນີ້:

1. ຮອງຮັບ ແລະ ຊຳລະ ເງິນກູ້ ໃນໄລຍະເວລາປະຕິບັດພັນທະເງິນກູ້;
2. ຮອງຮັບການລະດົມທຶນດ້ວຍຮູບການອອກຈຳໜ່າຍຫຼັກຊັບ;
3. ຮອງຮັບການລົງທຶນໂດຍກົງ ແລະ ຫຼັກຊັບ, ການສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ຕ່າງປະເທດ;
4. ຮອງຮັບການຈຳໜ່າຍສິນຄ້າ ແລະ ການບໍລິການ ທີ່ມີຄວາມຈຳເປັນຕ້ອງຮັບຊຳລະຢູ່ຕ່າງປະເທດ ເປັນຕົ້ນ ການວາງສະແດງສິນຄ້າ ແລະ ການຄ້າທາງອີເລັກໂຕຣນິກ.

**ມາດຕາ 7 ປະເພດບັນຊີເງິນຝາກຢູ່ຕ່າງປະເທດ**

ປະເພດບັນຊີເງິນຝາກຢູ່ຕ່າງປະເທດ ປະກອບດ້ວຍ ບັນຊີເງິນຝາກກະແສລາຍວັນ ແລະ ບັນຊີເງິນຝາກປະຢັດ. ສຳລັບການເປີດບັນຊີເງິນຝາກປະເພດອື່ນ ປະຕິບັດຕາມການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນແຕ່ລະກໍລະນີ.

## ໝວດທີ 3
## ການຂໍອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ

**ມາດຕາ 8 ການຂໍອະນຸຍາດ**

ເປົ້າໝາຍທີ່ຕ້ອງຂໍອະນຸຍາດ ຊຶ່ງມີຈຸດປະສົງເປີດບັນຊີເງິນຝາກຢູ່ຕ່າງປະເທດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ການຂໍອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ທຫລ ປະຈຳພາກ ຢ່າງເປັນລາຍລັກອັກສອນ ຫຼື ທາງອີເລັກໂຕຣນິກ.

ເອກະສານປະກອບການຂໍອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງກົມຄຸ້ມຄອງເງິນຕາຕ່າງປະເທດ;
2. ສຳເນົາໃບທະບຽນວິສາຫະກິດ ແລະ/ຫຼື ໃບອະນຸຍາດລົງທຶນ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);
4. ສຳເນົາໃບຢັ້ງຢືນຖານະການເງິນ ໜຶ່ງປີ ຍ້ອນຫຼັງ;
5. ສຳເນົາເອກະສານທີ່ກ່ຽວຂ້ອງໃນການຢັ້ງຢືນວົງເງິນ ທີ່ສະເໜີຂໍເປີດບັນຊີເງິນຝາກຢູ່ຕ່າງປະເທດ;

6. ເອກະສານເພີ່ມເຕີມ ຕາມແຕ່ລະກໍລະນີ ດັ່ງນີ້:

6.1. ການຮອງຮັບ ແລະ ຊຳລະ ເງິນກູ້ ໃນໄລຍະເວລາປະຕິບັດພັນທະເງິນກູ້: ສຳເນົາໃບອະນຸຍາດໃຫ້ ຫຼື ຮັບ ເງິນກູ້ຢືມກັບຕ່າງປະເທດ ອອກໂດຍກົມຄຸ້ມຄອງເງິນຕາຕ່າງປະເທດ;

6.2. ການຮອງຮັບການລະດົມທຶນດ້ວຍຮູບການອອກຈຳໜ່າຍຫຼັກຊັບ: ສຳເນົາໃບຮັບຮູ້ການໄປລະດົມທຶນຢູ່ຕ່າງປະເທດ ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6.3. ການຮອງຮັບການລົງທຶນໂດຍກົງ ຫຼື ຫຼັກຊັບ ຢູ່ຕ່າງປະເທດ: ສຳເນົາໃບອະນຸຍາດໄປລົງທຶນຢູ່ຕ່າງປະເທດ ອອກໂດຍຂະແໜງການທີ່ກ່ຽວຂ້ອງ, ສຳເນົາໃບອະນຸຍາດຂອງອົງການທີ່ກ່ຽວຂ້ອງຂອງປະເທດທີ່ຈະໄປລົງທຶນ ຫຼື ສັນຍາການຮ່ວມທຶນກັບວິສາຫະກິດຢູ່ຕ່າງປະເທດ ທີ່ມີການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;

6.4. ການຮອງຮັບການສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ຕ່າງປະເທດ: ສຳເນົາໃບອະນຸຍາດສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ຕ່າງປະເທດ ອອກໂດຍຂະແໜງການທີ່ກ່ຽວຂ້ອງ;

6.5. ການຮອງຮັບການຈຳໜ່າຍສິນຄ້າ ແລະ ການບໍລິການ ທີ່ມີຄວາມຈຳເປັນຕ້ອງຮັບຊຳລະຢູ່ຕ່າງປະເທດ: ສຳເນົາເອກະສານຢັ້ງຢືນການຮັບເຂົ້າຮ່ວມງານວາງສະແດງສິນຄ້າຢູ່ຕ່າງປະເທດທີ່ກ່ຽວຂ້ອງ ຫຼື ໃບອະນຸຍາດດຳເນີນທຸລະກິດການຄ້າເອເລັກໂຕຣນິກ ອອກໂດຍຂະແໜງການທີ່ກ່ຽວຂ້ອງ;

6.6. ເອກະສານອື່ນ ຕາມການຮຽກຮ້ອງຂອງກົມຄຸ້ມຄອງເງິນຕາຕ່າງປະເທດ.

**ມາດຕາ 9 ການພິຈາລະນາ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ພິຈາລະນາອອກໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ພາຍໃນສິບວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບຢ່າງຖືກຕ້ອງ ແລະ ຄົບຖ້ວນ. ໃນກໍລະນີປະຕິເສດ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 10 ໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ຂອງຜູ້ທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ;
2. ເປົ້າໝາຍການເປີດບັນຊີເງິນຝາກຢູ່ຕ່າງປະເທດ;
3. ຊື່ຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນ ທີ່ຈະເປີດບັນຊີເງິນຝາກຢູ່ຕ່າງປະເທດ;
4. ຊື່ຂອງທະນາຄານທຸລະກິດຢູ່ ສປປ ລາວ ທີ່ໃຫ້ບໍລິການໂອນເງິນເຂົ້າບັນຊີເງິນຝາກຢູ່ຕ່າງປະເທດ;
5. ວົງເງິນບັນຊີເງິນຝາກຢູ່ຕ່າງປະເທດ;
6. ປະເພດບັນຊີເງິນຝາກຢູ່ຕ່າງປະເທດ;
7. ໄລຍະເວລາຂອງການອະນຸຍາດ.

ໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ບໍ່ສາມາດມອບ ຫຼື ໂອນ ໃຫ້ຜູ້ອື່ນນຳໃຊ້.

**ມາດຕາ 11 ການປ່ຽນແທນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ຈະອອກໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດສະບັບໃໝ່ ເພື່ອປ່ຽນແທນສະບັບເກົ່າ ໃນກໍລະນີ ດັ່ງນີ້:

1. ມີການປ່ຽນແປງເນື້ອໃນຕົ້ນຕໍໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ;
2. ໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ເປື່ອເປື່ອນ, ຈີກຂາດ ຫຼື ເສຍຫາຍ.

ຜູ້ທີ່ມີຈຸດປະສົງປ່ຽນແທນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ຕ້ອງສະເໜີຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອພິຈາລະນາ.

ມາດຕາ 12 ຄ່າທຳນຽມ

ຄ່າທຳນຽມໃນການຄົ້ນຄວ້າການຂໍໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ຕ້ອງຊຳລະພາຍໃນວັນທີ່ຍື່ນຂໍອະນຸຍາດ ມີດັ່ງນີ້:

1. ການຄົ້ນຄວ້າເອກະສານໃນການອອກໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ຈຳນວນ ໜຶ່ງ ລ້ານ ກີບ ຕໍ່ຄັ້ງ ຕໍ່ບັນຊີ;

2. ການຄົ້ນຄວ້າການປ່ຽນແທນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ຈຳນວນ ຫ້າແສນ ກີບ ຕໍ່ຄັ້ງ ຕໍ່ບັນຊີ.

ມາດຕາ 13 ການໂອນເງິນເຂົ້າບັນຊີເງິນຝາກຢູ່ຕ່າງປະເທດ

ຜູ້ທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ສາມາດໂອນເງິນຕາຕ່າງປະເທດອອກ ສປປ ລາວ ເພື່ອເຂົ້າບັນຊີເງິນຝາກຢູ່ຕ່າງປະເທດຂອງຕົນ ບໍ່ເກີນວົງເງິນທີ່ກຳນົດໄວ້ໃນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍຜ່ານທະນາຄານທຸລະກິດແຫ່ງດຽວເທົ່ານັ້ນ ແລະ ການໂອນເງິນແຕ່ລະຄັ້ງ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ດັ່ງນີ້:

1. ໃບສະເໜີຂໍໂອນເງິນ ຕາມແບບພິມຂອງທະນາຄານທຸລະກິດ;
2. ໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ;
3. ເອກະສານທີ່ກ່ຽວຂ້ອງ ຕາມການກຳນົດຂອງທະນາຄານທຸລະກິດ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

ມາດຕາ 14 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ

ກົມຄຸ້ມຄອງເງິນຕາຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການເປີດບັນຊີເງິນຝາກຢູ່ຕ່າງປະເທດ ເພື່ອສະເໜີຄະນະຜູ້ວ່າການ ພິຈາລະນາ;
2. ພິຈາລະນາອອກໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ;
3. ເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນ ກ່ຽວກັບການເປີດບັນຊີເງິນຝາກຢູ່ຕ່າງປະເທດ;
4. ຕິດຕາມ ກວດກາ ການເປີດ ແລະ ເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ຂອງເປົ້າໝາຍທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ເປົ້າໝາຍອື່ນ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
5. ຜັດທະນາລະບົບການຂໍອະນຸຍາດເປີດ ແລະ ການລາຍງານການເຄື່ອນໄຫວ ບັນຊີເງິນຝາກຢູ່ຕ່າງປະເທດ ໃນຮູບແບບເອເລັກໂຕຣນິກ ເພື່ອໃຫ້ມີຄວາມສະດວກ ແລະ ທັນສະໄໝ;
6. ນຳໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້;
7. ສະຫຼຸບ ແລະ ລາຍງານ ວຽກງານຄຸ້ມຄອງການເປີດບັນຊີເງິນຝາກຢູ່ຕ່າງປະເທດ ໃຫ້ຄະນະຜູ້ວ່າການ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 15 ສິດ ແລະ ໜ້າທີ່ ຂອງ ທຫລ ປະຈຳພາກ

ທຫລ ປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບການເປີດບັນຊີເງິນຝາກຢູ່ຕ່າງປະເທດ ໃນຂອບເຂດການຄຸ້ມຄອງຂອງຕົນ;

2. ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານທີ່ກ່ຽວຂ້ອງ ກັບການສະເໜີຂໍອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ເພື່ອນຳສົ່ງກົມຄຸ້ມຄອງເງິນຕາຕ່າງປະເທດ;

3. ນຳສົ່ງການແຈ້ງຕອບ ຫຼື ໃບອະນຸຍາດເປີດບັນຊີເງິນຢູ່ຝາກຕ່າງປະເທດ ໃຫ້ຜູ້ຂໍອະນຸຍາດ;

4. ເກັບກຳ, ສັງລວມ, ຕິດຕາມ ແລະ ກວດກາ ເປົ້າໝາຍທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານທີ່ກ່ຽວຂ້ອງ ກັບການສະເໜີຂໍໂອນເງິນຕາຕ່າງປະເທດອອກ ສປປ ລາວ ເພື່ອເຂົ້າບັນຊີເງິນຝາກຢູ່ຕ່າງປະເທດຂອງລູກຄ້າ;

2. ເກັບກຳຂໍ້ມູນ ຕາມລະບຽບການຊອກຮູ້ລູກຄ້າ;

3. ເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວເປີດບັນຊີເງິນຝາກຢູ່ຕ່າງປະເທດ ເປັນຕົ້ນ ຈຳນວນທຸລະກຳ, ຈຳນວນເງິນ, ຈຸດປະສົງໃນການດຳເນີນທຸລະກຳ ແລະ ເອກະສານຄັດຕິດທີ່ກ່ຽວຂ້ອງ;

4. ປະຕິເສດການບໍລິການໂອນເງິນຕາຕ່າງປະເທດອອກ ສປປ ລາວ ເຂົ້າບັນຊີເງິນຝາກຢູ່ຕ່າງປະເທດ ຂອງຜູ້ທີ່ບໍ່ຢູ່ໃນເປົ້າໝາຍການເປີດບັນຊີເງິນຝາກຢູ່ຕ່າງປະເທດ ຫຼື ໂອນເກີນວົງເງິນ ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ**

ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ໂດຍສອດຄ່ອງກັບເປົ້າໝາຍ ແລະ ປະເພດ ທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ລະບຽບການຂອງປະເທດທີ່ກ່ຽວຂ້ອງ;

2. ໂອນຈາກບັນຊີຕົນເອງ ຫຼື ສະມາຊິກຄອບຄົວ ຢູ່ ສປປ ລາວ ເຂົ້າບັນຊີຕົນເອງຢູ່ຕ່າງປະເທດ ໃນວົງເງິນທີ່ເໝາະສົມກັບຄວາມຈຳເປັນໃຊ້ຈ່າຍຕົວຈິງ;

3. ລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ຕາມການສະເໜີ ໂດຍຜ່ານຊ່ອງທາງເອເລັກໂຕຣນິກ ທີ່ກົມຄຸ້ມຄອງເງິນຕາຕ່າງປະເທດ ກຳນົດ;

4. ປິດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ໂອນຍອດເຫຼືອບັນຊີ ກັບຄືນ ສປປ ລາວ ພາຍໃນ ສາມສິບວັນ ພາຍຫຼັງສິ້ນສຸດການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງເປົ້າໝາຍທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ເປົ້າໝາຍທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ໂດຍສອດຄ່ອງກັບເປົ້າໝາຍ ແລະ ປະເພດ ທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ລະບຽບການຂອງປະເທດທີ່ກ່ຽວຂ້ອງ;

2. ໂອນຈາກບັນຊີຕົນເອງ ຢູ່ ສປປ ລາວ ເຂົ້າບັນຊີຢູ່ຕ່າງປະເທດ ຕາມວົງເງິນທີ່ໄດ້ຮັບອະນຸຍາດ;

3. ນຳສົ່ງສຳເນົາເອກະສານຢັ້ງຢືນການເປີດບັນຊີເງິນຝາກຢູ່ຕ່າງປະເທດ ໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນທີ່ສຳເລັດການເປີດບັນຊີເງິນຝາກດັ່ງກ່າວ;

4. ໂອນລາຍຮັບຈາກການຈຳໜ່າຍສິນຄ້າ ແລະ ການບໍລິການ ທີ່ມີຄວາມຈຳເປັນ ຕາມເປົ້າໝາຍທີ່ກຳນົດໃນມາດຕາ 6 ຂໍ້ 4 ກັບຄືນ ສປປ ລາວ ຕາມລະບຽບການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ;

5. ລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນປະຈຳໄຕມາດ ຫຼື ຕາມການສະເໜີ ໂດຍຜ່ານຊ່ອງທາງເອເລັກໂຕຣນິກ ທີ່ກົມຄຸ້ມຄອງເງິນຕາຕ່າງປະເທດ ກຳນົດ;

6. ປິດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ໂອນຍອດເຫຼືອບັນຊີ ກັບຄືນ ສປປ ລາວ ພາຍໃນ ສາມສິບວັນ ພາຍຫຼັງສິ້ນສຸດການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ ພ້ອມທັງແຈ້ງຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນ ສາມວັນ ລັດຖະການ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຜູ້ທີ່ເປີດບັນຊີເງິນຝາກຢູ່ຕ່າງປະເທດ ເພື່ອຮັບຜົນປະໂຫຍດປະກັນໄພ**

ຜູ້ທີ່ເປີດບັນຊີເງິນຝາກຢູ່ຕ່າງປະເທດ ເພື່ອຮັບຜົນປະໂຫຍດປະກັນໄພ ກ່ອນຂໍ້ຕົກລົງສະບັບນີ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ລົງທະບຽນຂໍ້ມູນບັນຊີເງິນຝາກຢູ່ຕ່າງປະເທດ ນຳກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍຜ່ານຊ່ອງທາງທີ່ກຳນົດ ເພື່ອຮັບສິດໃນການໂອນເງິນຜົນປະໂຫຍດປະກັນໄພກັບຄືນ ສປປ ລາວ;

2. ລາຍງານການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນປະຈຳໄຕມາດ ຫຼື ຕາມການສະເໜີ ໂດຍຜ່ານຊ່ອງທາງ ທີ່ກົມຄຸ້ມຄອງເງິນຕາຕ່າງປະເທດ ກຳນົດ;

3. ປິດບັນຊີເງິນຝາກຢູ່ຕ່າງປະເທດ ພາຍໃນ ສິບຫ້າວັນ ລັດຖະການ ພາຍຫຼັງສິ້ນສຸດການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ຂໍ້ຫ້າມສຳລັບເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ**

ຫ້າມເປົ້າໝາຍທີ່ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;
2. ບໍ່ລາຍງານຂໍ້ມູນການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ຕາມການສະເໜີ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 21 ຂໍ້ຫ້າມສຳລັບເປົ້າໝາຍທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ຫ້າມເປົ້າໝາຍທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ສອດຄ່ອງກັບເປົ້າໝາຍທີ່ຕົນໄດ້ຮັບອະນຸຍາດ;
2. ມອບເງິນສິດ ແລະ/ຫຼື ໂອນເງິນ ເຂົ້າບັນຊີເງິນຝາກຢູ່ຕ່າງປະເທດ ເກີນວົງເງິນທີ່ລະບຸໄວ້ໃນໃບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ;
3. ບໍ່ລາຍງານຂໍ້ມູນການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ ຕິດຕໍ່ກັນເກີນ ສາມໄຕມາດ ຫຼື ປິດເບືອນຂໍ້ມູນການລາຍງານ;
4. ບໍ່ປິດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ບໍ່ລາຍງານກົມຄຸ້ມຄອງເງິນຕາຕ່າງປະເທດ ພາຍຫຼັງສິ້ນສຸດການເຄື່ອນໄຫວບັນຊີເງິນຝາກຢູ່ຕ່າງປະເທດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 22 ມາດຕະການສຶກສາອົບຮົມ

ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຢ່າງເປັນລາຍລັກອັກສອນ.

ມາດຕາ 23 ມາດຕະການປັບໃໝ

ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມມາແລ້ວ ແຕ່ຍັງສືບຕໍ່ລະເມີດຊ້ຳ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝຈຳນວນ 50,000,000 ກີບ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 20 ຂໍ້ 1 ແລະ ມາດຕາ 21 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້;
2. ປັບໃໝຈຳນວນ 10,000,000 ກີບ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 21 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້;
3. ປັບໃໝຈຳນວນ 30,000,000 ກີບ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 20 ຂໍ້ 2 ແລະ ມາດຕາ 21 ຂໍ້ 3 ແລະ ຂໍ້ທີ 4 ຂອງຂໍ້ຕົກລົງສະບັບນີ້;

ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

ມາດຕາ 24 ການຈັດຕັ້ງປະຕິບັດ

ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຜູ້ມີພຸມລຳເນົາ ຢູ່ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 25 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນເນື້ອໃນທີ່ກ່ຽວຂ້ອງກັບການເຄື່ອນໄຫວການເປີດບັນຊີເງິນຝາກຢູ່ຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019.

ຜູ້ວ່າການ

ບຸນຄຳ ວໍລະຈິດ